ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະພາບໍລິຫານ ທຫລ ຕີລາຄາຜົນການເຄື່ອນໄຫວປີ 2020



ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ II ປະຈຳປີ 2020 ໄດ້ສຳເລັດລົງດ້ວຍໝາກຜົນຈົບງາມໃນວັນທີ 9 ກຸມພາ 2021 ທີ່ຫ້ອງປະຊຸມ ທຫລ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ; ພ້ອມນີ້, ກໍ່ມີບັນດາຮອງປະທານ-ກຳມະການສະພາບໍລິຫານ ທຫລ, ຮອງຜູ້ວ່າການ ທຫລ ແລະ ບັນດາກົມທີ່ກ່ຽວຂ້ອງ ໂດຍກອງປະຊຸມໄດ້ຕີລາຄາ ແລະ ທົບທວນຄືນການຈັດຕັ້ງປະຕິບັດວຽກງານໄລຍະ 1 ປີ ແລະ ກຳນົດທິດທາງແຜນການສຳລັບປີ 2021.

ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາຕໍ່ບົດສະຫຼຸບລາຍງານການເຄື່ອນໄຫວວຽກງານທະນາຄານປີ 2020, ທິດທາງແຜນການປີ 2021 ໂດຍປະກອບດ້ວຍການເຄື່ອນໄຫວວຽກງານຂອງທຫລ 3 ເດືອນທ້າຍປະຈຳປີ 2020 ແລະທິດທາງແຜນການປີ 2021; ການຈັດຕັ້ງປະຕິບັດແຜນເງິນຕາຮອດທ້າຍປີ 2020 ແລະ ທິດທາງແຜນການປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2020 ແລະ ທິດທາງແຜນການປີ 2021; ພ້ອມນີ້, ກໍມີບາງບັນຫາປິ່ນອ້ອມອື່ນໆຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງຜ່ານມາ.

ຄືດັ່ງທີ່ຮູ້ແລ້ວໃນວ່າປີ 2020 ຜ່ານມາ, ສະພາບການຂອງສາກົນ ແລະ ພາກພື້ນສືບຕໍ່ຜັນແປຢ່າງໄວວາ, ຂາດຄວາມມີສະເຖຍລະພາບ, ໄພທຳມະຊາດ ແລະ ການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຍັງບໍ່ທັນຜ່ອນຄາຍລົງ. ຄຽງຄູ່ກັນນັ້ນ, ພາຍໃນປະເທດບັນຫາສະພາບເສດຖະກິດ, ການເງິນ-ເງິນຕາທີ່ບອບບາງ, ມີໜີ້ສິນສູງ ແລະ ສະພາບແຫຼ່ງເງິນຕາຕ່າງປະເທດທີ່ຈະມາດຸ່ນດ່ຽງໃຫ້ສັງຄົມ ແລະ ຊຳລະໜີ້ຕ່າງປະເທດຍັງມີຈຳກັດຊຶ່ງສິ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ການຮັກສາສະເຖຍລະພາບທາງດ້ານການຄຸ້ມຄອງເສດຖະກິດມະຫາພາກຢ່າງຫຼີກລ່ຽງບໍ່ໄດ້. ເຖິງຢ່າງໃດກໍຕາມ, ພາຍໃຕ້ການຊີ້ນຳຕົວຈິງຢ່າງໃກ້ສິດຂອງພັກແລະລັດຖະບານ, ການສະ

ໜັບສະໜູນຈາກກຳມະການສະພາບໍລິຫານແລະຄວາມເປັນເຈົ້າການຂອງຄະນະພັກ-ຄະນະນຳ ທຫລ ທີ່ໄດ້ປະຕິບັດໜ້າທີ່ການເມືອງຂອງຕົນຊຶ່ງເຫັນວ່າ: ສະພາບເສດຖະກິດ, ການເງິນ-ເງິນຕາຍັງມີຄວາມສະຫງົບໂດຍພື້ນຖານ ແລະ ສະພາບຄ່ອງຂອງລະບົບທະນາຄານ-ສະຖາບັນການເງິນຍັງສືບຕໍ່ເຄື່ອນໄຫວປົກກະຕິແຕ່ກໍ່ຍັງມີສິ່ງທ້າທ້າຍຫຼາຍດ້ານທີ່ຍັງຈະຕ້ອງປະເຊີນຕໍ່ໜ້າເພື່ອສືບຕໍ່ແກ້ໄຂໃຫ້ດີຂຶ້ນ.







ທ່ານຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ ໄດ້ຕີລາຄາສູງຕໍ່ການນຳພາ-ຊີ້ນຳຂອງສູນກາງພັກ ແລະ ລັດຖະບານໃນຜ່ານມາໂດຍສະເພາະການມີສ່ວນຮ່ວມ ແລະ ຄວາມພະຍາຍາມຂອງທຸກຝ່າຍໃນສັງຄົມທີ່ໄດ້ມີການປະກອບສ່ວນເຂົ້າໃນຂະແໜງການເງິນຕາໃນນີ້ກໍ່ມີບັນດາຂະແໜງການ-ທ້ອງຖິ່ນ, ສະພາບໍລິຫານ ທຫລ, ບັນດາກົມທີ່ກ່ຽວຂ້ອງຂອງ ທຫລ ຈຶ່ງສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍັງເນັ້ນຕື່ມວ່າ: ປີ 2021 ເປັນປີທຳອິດແຫ່ງການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈມະຕິ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງຊາດ ຄັ້ງທີ IX (2021-2025) ຂອງລັດເຂົ້າສູ່ການຈັດຕັ້ງປະຕິບັດຕົວຈິງເພື່ອຈັດຕັ້ງບັນດາຄາດໝາຍທີ່ກຳນົດໄວ້ ແລະ ຈຶ່ງສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແຜນເງິນຕາໂດຍສະເພາະການຮັກສາສະຖຽລະພາບທາງດ້ານເງິນຕາແຫ່ງຊາດ, ປັບປຸງລະບົບທະນາຄານໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຈັດຕັ້ງແຜນງົບປະມານທຫລຕາມມະຕິກອງປະຊຸມສະພາບໍລິຫານທຫລຮອງຮັບດ້ວຍຄວາມເປັນເຈົ້າການແລະມີຜົນໄດ້ຮັບເປັນຢ່າງດີ

**# ຂ່າວ: ຣັດສະໝີ ດວງສັດຈະ;**

**# ພາບ: ວັນປະເສີດ ສີມບູນຂັນ**